ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງອຸດສາຫະກຳ ແລະການຄ້າ ເລກທີ 1405/ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 11 ກໍລະກົດ 2012.

# ບົດແນະນຳ

# ການຈັດຕັ້ງປະຕິບັດດຳລັດ ເລກທີ 474/ນຍ

# ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ

ເຖິງ :- ບັນດາ ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສະຖາບັນ ທີ່ຢູ່ອ້ອມຂ້າງ ກະຊວງອຸດສາຫະກຳ ແລະ ການຄ້າ;

- ຫົວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ ແລະ ນະຄອນຫຼວງໃນທົ່ວປະເທດ;
- ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ;

ເລື່ອງ : ການຈັດຕັ້ງປະຕິບັດດຳລັດ ເລກທີ 474/ນຍ, ລົງວັນທີ 18/11/2010 ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.

- ອີງຕາມດຳລັດເລກທີ 522/ນຍ, ລົງວັນທີ 23/12/11, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ.
- ອີງຕາມດຳລັດເລກທີ 474 /ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.
- ອີງຕາມ ຂໍ້ຕົກລົງ ເລກທີ 1065/ອຄ.ຄພນ, ລົງວັນທີ 04 ມິຖຸນາ 2012; ວ່າດ້ວຍອົງການຄຸ້ມຄອງລາຄາ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ.

ເພື່ອຜັນຂະຫຍາຍ ດຳລັດ ເລກທີ 474/ນຍ ແລະ ຂໍ້ຕົກລົງ ເລກທີ 1065/ອຄ.ຄພນ ດັ່ງກ່າວຂ້າງເທິງໃຫ້ໄດ້ຮັບຜົນດີ. ແນໃສ່ກຳນົດພາລະບົດບາດ ແລະ ລະບຽບການໃນການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການທີ່ຂະແໜງອຸດສາຫະກຳ ແລະ ການຄ້າຄຸ້ມຄອງ, ໂດຍສະເພາະແມ່ນສິນຄ້າທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ສິນຄ້າທີ່ເປັນປັດໃຈພື້ນຖານໃຫ້ແກ່ການຜະລິດ ແລະ ສິນຄ້າກະສິກຳປະເພດສະບຽງອາຫານ.

ເພື່ອກຳນົດແຈ້ງລະບຽບການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ທີ່ຢູ່ໃນ "ບັນຊີ ກ" ແລະ "ບັນຊີ ຂ" ດ້ວຍໂຄງປະກອບລາຄາ ແລະ ແນະນຳໃຫ້ຜູ້ດຳເນີນທຸລະກິດ ປະຕິບັດຕາມລະບຽບການຢ່າງເຂັ້ມງວດ ກ່ອນຈະຂຶ້ນ ຫຼື ລົງລາຄາໃນແຕ່ລະຄັ້ງ.

ເພື່ອເປັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ດຳເນີນທຸລະກິດການຄ້າ ແລະ ການບໍລິການ ທີ່ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ແລະ ເພື່ອກຳຈັດການສວຍໂອກາດ ແລະ ລະເມີດຝ່າຝືນລະບຽບການກ່ຽວກັບລາຄາສິນຄ້າ ແລະ ຄ່າບໍລິການ ເຊັ່ນ: ສ້າງສະພາບການປັ່ນປ່ວນ ແລະ

ກັກຕູນສິນຄ້າ ເພື່ອຫວັງເອົາກຳໄລໂດຍພາລະການ, ຊຶ່ງເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ ແລະ ດ້ານໜຶ່ງ ແມ່ນເພື່ອເປັນການ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ ບໍ່ໃຫ້ຖືກເອົາປຽບທາງດ້ານ ລາຄາ ໃນການຊື້ສິນຄ້າ ແລະ ຮັບການບໍລິການ ຈາກຜູ້ດຳເນີນທຸລະກິດ ດັ່ງນັ້ນ;

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກບົດແນະນຳ:

ໃຫ້ອົງການຄຸ້ມຄອງລາຄາຂອງຂະແໜງອຸດສາຫະກຳ ແລະການຄ້າ ປະຕິບັດການຄຸ້ມຄອງ ແລະ ຄວບຄຸມລາຄາສິນຄ້າ ແລະ ຄ່າບໍລິການ ທີ່ຂະແໜງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄຸ້ມຄອງດ້ວຍ ວິທີການດັ່ງນີ້ :

**I.** <u>ກຳນົດມາດຕະການ ໃນການຄວບຄຸມລາຄາ</u>.

1. ພິຈາລະນາກຳນົດເອົາລາຍການສິນຄ້າ ແລະ ບໍລິການທີ່ຂະແໜງອຸດສາຫະກຳ ແລະການຄ້າຄຸ້ມຄອງເຂົ້າມາເປັນລາຍການສິນຄ້າຄວບຄຸມ ໂດຍອີງຕາມສະພາບ ແລະ ຄວາມຈຳເປັນໃນແຕ່ລະໄລຍະ.

   ພ້ອມກັນນັ້ນ, ກໍພິຈາລະນາເອົາລາຍການສິນຄ້າຄວບຄຸມອອກ ເປັນລາຍການສິນຄ້າທີ່ຕ້ອງຕິດ ຕາມການເໜັງຕີງຂອງລາຄາ ໂດຍອີງຕາມສະພາບ ແລະ ຄວາມຈຳເປັນໃນແຕ່ລະໄລຍະ.
2. ພາຍຫຼັງທີ່ໄດ້ພິຈາລະນາ ແລະ ໄດ້ກຳນົດແລ້ວ, ໃຫ້ສະເໜີຂັ້ນເທິງ ເພື່ອພິຈາລະນາອານຸມັດກ່ອນການຈັດຕັ້ງປະຕິບັດໃນແຕ່ລະຄັ້ງ.
3. ທຸກປະເພດສິນຄ້າ ທີ່ລັດຄວບຄຸມລາຄາ ແລະ ຕິດຕາມສະພາບການເໜັງຕີງຂອງລາຄາຢ່າງໃກ້ຊິດ ຈະມີການປັບປຸງແປງໄປຕາມສະພາບຄວາມຈຳເປັນໃນແຕ່ລະໄລຍະ ແລະ ຈະຕ້ອງປັບປຸງແປງຢ່າງໜ້ອຍປີລະຄັ້ງ.
4. ເອົາໃຈໃສ່ຄຸ້ມຄອງ ແລະ ຄວບຄຸມລາຄາສິນຄ້າ ທີ່ຈໍລະຈອນຈຳໜ່າຍຢູ່ໃນທ້ອງຖິ່ນຂອງຕົນ ຢ່າງເຂັ້ມງວດ;ສິນຄ້າໃດເປັນລາຍການຄວບຄຸມລາຄາ ກໍໃຫ້ໃຊ້ມາດຕະການຄວບຄຸມ ນັບທັງລາຄາຂາຍຍົກ ແລະ ລາຄາຂາຍຍ່ອຍ ແລະ ຕ້ອງໄດ້ຄວບຄຸມດ້ວຍໂຄງປະກອບລາຄາທີ່ຊັດເຈນ; ສິນຄ້າໃດເປັນລາຍການສິນ ຄ້າທີ່ຕ້ອງຕິດຕາມການເໜັງຕີງຂອງລາຄາ ກໍໃຫ້ຕິດຕາມຢ່າງໃກ້ຊິດ, ກຳໃຫ້ໄດ້ສາເຫດກ່ຽວກັບການປ່ຽນແປງລາຄາຂອງສິນຄ້າເຫຼົ່ານັ້ນໃນແຕ່ລະໄລຍະ.

**II.** <u>ກຳນົດລາຍການສິນຄ້າ ແລະ ຄ່າບໍລິການ</u>.

ລາຍການສິນຄ້າ ທີ່ຂະແໜງອຸດສາຫະກຳ ແລະ ການຄ້າຄຸ້ມຄອງ ໄດ້ກຳນົດລະອຽດໃນຂໍ້ (ກ) ແລະ ຂໍ້ (ຂ) ລຸ່ມນີ້; ລາຍການສິນຄ້າທີ່ຢູ່ໃນສອງບັນຊີດັ່ງກ່າວ ແມ່ນຈະຖືກປັບປຸງແປງຢ່າງໜ້ອຍປີລະຄັ້ງ, ສ່ວນລາຍການບໍລິການແມ່ນຍັງບໍ່ທັນໄດ້ກຳນົດ. ລາຍລະອຽດຂອງລາຍການສິນຄ້າ ມີດັ່ງນີ້:

**ກ)- <u>ລາຍການສິນຄ້າຄວບຄຸມ</u>.**

ລາຍການສິນຄ້າຄວບຄຸມ ກຳນົດຂຶ້ນບົນພື້ນຖານຄວາມຈຳເປັນໃນແຕ່ລະໄລຍະ, ເປັນສິນຄ້າທີ່ມີຄວາມອ່ອນໄຫວ ແລະ ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ຕໍ່ການຜະລິດ ແລະ ຕໍ່ຄວາມໝັ້ນຄົງຂອງຊາດ.

ລາຍການສິນຄ້າຄວບຄຸມຂອງຂະແໜງອຸດສາຫະກຳ ແລະ ການຄ້າຄຸ້ມຄອງມີ 04ປະເພດ ແລະ ລວມມີ 14 ລາຍການ ຕາມໄດ້ກຳນົດໄວ້ໃນ "ບັນຊີ ກ" ຂອງຂໍ້ຕົກລົງ ເລກທີ 1064/ອຄ, ລົງວັນທີ 04 ມິຖຸນາ (06) 2012 (ລາຍການລະອຽດໄດ້ລະບຸໃນເອກະສານຊ້ອນທ້າຍ "ບັນຊີ ກ").

ຂ)- ລາຍການສິນຄ້າທີ່ຕ້ອງຕິດຕາມການເໜັງຕີງຂອງລາຄາ.

ລາຍການສິນຄ້າທີ່ຕ້ອງຕິດຕາມການເໜັງຕີງຂອງລາຄາກຳນົດຂຶ້ນບົນພື້ນຖານສິນຄ້າທີ່ມັກມີການປ່ຽນແປງລາຄາໄປຕາມຄວາມຕ້ອງການ, ຕາມລະດູການ, ໃນເທດສະການ ຫຼືງານບຸນຕ່າງໆ; ຊຶ່ງເຮັດໃຫ້ຜູ້ຊົມໃຊ້ກໍຄືສັງຄົມໂດຍລວມ ພົບຄວາມຫຍຸ້ງຍາກທາງດ້ານລາຄາ.

ລາຍການສິນຄ້າທີ່ຕ້ອງຕິດຕາມການເໜັງຕີງຂອງລາຄາ ມີທັງໝົດ 08 ໝວດ ແລະ ລວມມີ 106 ລາຍການ ຕາມທີ່ໄດ້ກຳນົດໄວ້ໃນ "ບັນຊີ ຂ" ຂອງຂໍ້ຕົກລົງເລກທີ 1064/ອຄ, ລົງວັນທີ 04 ມິຖຸນາ 2012 (ລາຍການລະອຽດໄດ້ລະບຸໃນເອກະສານຊ້ອນທ້າຍ "ບັນຊີ ຂ").

III. ວິທີການຄວບຄຸມ ແລະ ຄຸ້ມຄອງ.

ກ)- ສິນຄ້າຄວບຄຸມລາຄາ.

1. ກຳນົດລາຍການສິນຄ້າຄວບຄຸມ (ມີການປ່ຽນແປງຢ່າງໜ້ອຍປີລະຄັ້ງ).
2. ຄວບຄຸມສິນຄ້າໃນຄັງແຮສຳຮອງ (ຖ້າມີ).
3. ຄຸ້ມຄອງລາຄາຕົ້ນທຶນ (ການນຳເຂົ້າ-ການຜະລິດ).
4. ກຳນົດລາຄາຈຳໜ່າຍ (ຂາຍຍົກ-ຂາຍຍ່ອຍ) ຢ່າງເຂັ້ມງວດ ດ້ວຍໂຄງສ້າງລາຄາ.
5. ສ້າງແຜນດູນດ່ຽງການສະໜອງ ແລະ ຄວາມຕ້ອງການ.
6. ກຳນົດແຫຼ່ງສິນຄ້າ ແລະ ຈັດລະບົບການຈຳໜ່າຍ (ຈໍລະຈອນ) ເພື່ອຮັບປະກັນການສະໜອງ, ປ້ອງກັນບໍ່ໃຫ້ມີການກັກຕຸນສິນຄ້າເກີດຂຶ້ນ.
7. ຄົ້ນຄວ້າ ແລະ ນຳສະເໜີ ການຖົມຊຸມລາຄາສິນຄ້າ ໃນກໍລະນີທີ່ມີຄວາມຈຳເປັນ.
8. ແນະນຳໃຫ້ຕິດລາຄາສິນຄ້າ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ຂ)- ສິນຄ້າທີ່ຕ້ອງຕິດຕາມການເໜັງຕີງຂອງລາຄາ.

1. ກຳນົດລາຍການສິນຄ້າທີ່ຕ້ອງຕິດຕາມການເໜັງຕີງຂອງລາຄາ(ມີການປ່ຽນແປງຢ່າງໜ້ອຍປີລະຄັ້ງ).
2. ເກັບກຳສະພາບ ແລະ ຕິດຕາມການເໜັງຕີງລາຄາຢ່າງໃກ້ຊິດ, ປະຕິບັດການລາຍງານ ເປັນປະຈຳອາທິດ ແລະ ປະຈຳເດືອນ; ໃຫ້ຮູ້ໄດ້ສາຍເຫດ ການເໜັງຕີງຂອງລາຄາ ເພື່ອແກ້ໄຂບັນຫາໃຫ້ທັນກັບສະພາບການ ແລະ ຖ້າເປັນສິນຄ້າທີ່ຈຳເປັນ, ມີຜົນກະທົບແຮງຕໍ່ສັງຄົມ ກໍສາມາດສະເໜີໃຫ້ໄປຢູ່ໃນລາຍການສິນຄ້າຄວບຄຸມ "ບັນຊີ ກ" ໄດ້.
3. ແນະນຳໃຫ້ຕິດລາຄາສິນຄ້າ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

IV. ສິດ ແລະ ໜ້າທີ່ ໃນວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຂອງອົງການຄຸ້ມຄອງລາຄາໃນຂະແໜງອຸດສາຫະກຳ ແລະ ການຄ້າ.

1. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງລາຄາ ຂັ້ນກະຊວງ
   - ນອກຈາກສິດ ແລະ ໜ້າທີ່ ທີ່ໄດ້ລະບຸໄວ້ໃນມາດຕາ 14 ຂອງດຳລັດ ເລກທີ 474/ນຍ ແລ້ວ, ຍັງຮັບຜິດຊອບໂດຍກົງຕໍ່ລັດຖະມົນຕີວ່າການ ໃນວຽກງານຕິດຕາມລາຄາສິນຄ້າອຸປະໂພກ, ບໍລິໂພກທົ່ວໄປ ແລະ ສິນຄ້າຮັບໃຊ້ການຜະລິດ, ໂດຍປະສານກັບຂະແໜງການທີ່ກ່ຽວຂ້ອງ ເພື່ອກຳນົດເອົາລາຍການ ສິນຄ້າ ແລະ ບໍລິການ ຄວບຄຸມລາຄາໃນແຕ່ລະໄລຍະ;
   - ຊີ້ນຳ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງລາຄາ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ຢ່າງໃກ້ຊິດ;

- ຄົ້ນຄວ້າ, ກຳນົດ ແລະ ຮັບຮອງເອົາໂຄງປະກອບລາຄາສິນຄ້າ ແລະ ຄ່າບໍລິການ ຄວບຄຸມ ນັບທັງການຂາຍຍົກ ແລະ ຂາຍຍ່ອຍ, ບົນພື້ນຖານການສະເໜີຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ;
- ຊີ້ນຳ, ຕິດຕາມ ແລະ ກວດກາ ໂຄງປະກອບລາຄາທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງສະເໜີມາ;
- ຊີ້ນຳ, ຕິດຕາມ ແລະ ກວດກາ ການໜອງສິນຄ້າຄວບຄຸມ ໃຫ້ແກ່ຄວາມຕ້ອງການຂອງສັງ ຄົມໃຫ້ພຽງພໍ, ເພື່ອເຮັດໃຫ້ ສັງຄົມມີຄວາມສະຫງົບ ທາງດ້ານສິນຄ້າ ແລະ ລາຄາ;
- ຄວບຄຸມລາຄາສິນຄ້າ ປະເພດນ້ຳມັນເຊື້ອໄຟ ຕາມທີ່ລະບຸໄວ້ໃນໂຮແມ້ງ I ຂອງ "ບັນຊີ ກ";
- ຄົ້ນຄວ້າຫາສາຍເຫດ ຂອງການເໜັງຕີງທາງດ້ານລາຄາ ແລະ ຊອກຫາວິທີແກ້ໄຂບັນຫາໃຫ້ທັນເວລາໃນແຕ່ລະໄລຍະ;
- ຄົ້ນຄວ້າ ສັງລວມ ລາຍການສິນຄ້າ ແລະ ການບໍລິການ ທີ່ຂະແໜງການອື່ນຮັບຜິດຊອບ ພ້ອມທັງປະກາດ ຫຼື ແຈ້ງໃຫ້ສັງຄົມໄດ້ຮັບຮູ້ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການ ໃນລາຍການສິນຄ້າ ແລະ ການບໍລິການເຫຼົ່ານັ້ນ ທັງໃນສະພາບປົກກະຕິ ຫຼື ໃນເວລາມີການປ່ຽນແປງ;
- ຄົ້ນຄ້ວານະໂຍບາຍ ແລະ ມາດຕະການໃນການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຄວບຄຸມເປັນແຕ່ລະໄລຍະ;

2. <u>ສິດ ແລະ ໜ້າທີ່ຂອງອົງການຄົຸ້ມຄອງລາຄາ ຂັ້ນແຂວງ ແລະ ນະຄອນຫຼວງ.</u>
   - ນອກຈາກສິດ ແລະ ໜ້າທີ່ງໄດ້ລະບຸໄວ້ໃນມາດຕາ 15 ຂອງດຳລັດເລກທີ 474/ນຍແລ້ວ, ຍັງຕ້ອງໄດ້ຕິດຕາມ, ກວດກາ ແລະ ຄຸ້ມຄອງ ລາຄາສິນຄ້າ ແລະ ຄ່າບໍລິການ ທີ່ຈຳໜ່າຍຢູ່ພາຍໃນຂອບເຂດທ້ອງຖິ່ນຂອງຕົນ ຕາມລະບຽບການນັບທັງລາຍການສິນຄ້າທີ່ກຳນົດໄວ້ໃນ "ບັນຊີ ກ" ແລະ ລາຍ ການສິນຄ້າທີ່ກຳນົດໄວ້ໃນ "ບັນຊີ ຂ" ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ແບ່ງໃຫ້ຄຸ້ມຄອງໃນແຕ່ລະໄລຍະ.
   - ເປັນເຈົ້າການຜັນຂະຫຍາຍ ການຈັດຕັ້ງປະຕິບັດດ□າລັດ 474/ນຍ, ບົດແນະນຳສະບັບນີ້ ແລະ ຂໍ້ກຳນົດ, ກົດລະບຽບ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການໃຫ້ໄດ້ຮັບຜົນດີ.
   - ຕິດຕາມ, ຄົ້ນຄວ້າ ແລະ ສະເໜີການປ່ຽນແປງລາຍການສິນຄ້າຄວບຄຸມ ແລະ ລາຍການສິນຄ້າທີ່ຕ້ອງຕິດຕາມການເໜັງຕີງຂອງລາຄາ ຢ່າງໜ້ອຍປີລະຄັ້ງ ເມື່ອເຫັນວ່າມີຄວາມຈຳເປັນ.
   - ຄວບຄຸມ ລາຄາສິນຄ້າ ປະເພດເຂົ້າ, ປະເພດຊີ້ນ ແລະ ປະເພດປາ ຕາມທີ່ລະບຸໄວ້ໃນໂຮ ແມ້ງ II, III ແລະ IV ຂອງ "ບັນຊີ ກ" ດ້ວຍວິທີການ : ຊີ້ນຳໃຫ້ຜູ້ປະກອບການ ສ້າງ ແລະ ສະເໜີໂຄງປະກອບລາຄາ ນັບທັງລາຄາຕົ້ນທຶນການຜະລິດ, ລາຄາຕົ້ນທຶນນຳເຂົ້າ, ລາຄາຂາຍຍົກ ແລະ ລາຄາຂາຍຍ່ອຍ; ເພື່ອພິຈາລະນາ ແລະ ສະເໜີຂັ້ນເທິງຮັບຮູ້ ແລະ ຮັບຮອງເອົາໂຄງປະກອບລາຄາດັ່ງກ່າວ ແລ້ວຊີ້ນຳຄືນໃຫ້ຜູ້ປະກອບການປະຕິບັດຕາມໂຄງປະກອບລາຄານັ້ນ, ພ້ອມທັງແນະນຳໃຫ້ຂະເຈົ້າຕິດລາຄາສິນຄ້າ ຕາມລະບຽບກົດໝາຍຂອງ ສປປ ລາວ ວາງອອກຢ່າງເຂັ້ມງວດ;
   - ຊີ້ນຳ, ກວດກາ ແລະ ຕິດຕາມ ຫ້ອງການອຸດສາຫະກຳ ແລະ ການຄ້າບັນດາເມືອງ ທີ່ຢູ່ໃນທ້ອງຖິ່ນຂອງຕົນ ໃຫ້ຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ທີ່ກ່າວມາ

ຂ້າງເທິງດ້ວຍຄວາມເປັນເຈົ້າການ. ການປະຕິບັດດັ່ງກ່າວ ຕ້ອງແບ່ງວຽກງານ ແລະ ຄວາມຮັບຜິດຊອບ ໃຫ້ຕາມພາລະບົດບາດ ຢ່າງລະອຽດຊັດເຈນ;

- ຈັດຕັ້ງໃຫ້ມີບ່ອນຮັບຄໍາຮ້ອງທຸກ ເປັນແຕ່ລະຈຸດຢູ່ໃນຂອບເຂດແຂວງ ແລະ ນະຄອນຫຼວງ ທີ່ຕົນຮັບຜິດຊອບ, ເພື່ອເປັນບ່ອນໄກ່ເກ່ຍ ແລະ ແກ້ໄຂຄໍາຮ້ອງທຸກຂອງຜູ້ຊົມໃຊ້ ທີ່ຖືກເອົາປຽບທາງດ້ານສິນຄ້າ, ລາຄາ, ມາດຕາວັດແທກ ຊັ່ງ ຜ່ອງ, ການໃຫ້ບໍລິການ ແລະອື່ນໆ ຈາກຜູ້ຂາຍສິນຄ້າ ແລະ ຜູ້ໃຫ້ບໍລິການ ຫລື ຮັບຄໍາຮ້ອງທຸກ, ຮ້ອງຟ້ອງ ຂອງຜູ້ປະກອບການ ກ່ຽວກັບການປະຕິບັດໜ້າທີ່ຂອງພະນັກງານ ແລະເຈົ້າໜ້າທີ່ຕ່າງໆ ໃນການກວດກາສິນຄ້າ ແລະ ການບໍລິການ ທີ່ມີການປະພຶດຕົນບໍ່ສຸພາບ ຫຼື ມີ ການກະທໍາທີ່ບໍ່ຖືກຕ້ອງ; ໂດຍເປັນເຈົ້າການໃນການຕິດຕາມ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວ ຂ້ອງ ເພື່ອດໍາເນີນການແກ້ໄຂ, ໄກ່ເກ່ຍບັນຫາຕ່າງໆກ່ຽວກັບການລະເມີດດໍາລັດ 474/ນຍ, ຂໍ້ກໍານົດ ແລະ ບັນດາລະບຽບການ ທີ່ກ່ຽວຂ້ອງກັບລາຄາສິນຄ້າ ແລະ ຄ່າບໍລິການ.
- ຖ້າການກະທໍາຂອງບຸກຄົນດັ່ງກ່າວ ຫາກເກີນສິດອໍານາດ ທີ່ຕົນບໍ່ສາມາດຈະຕັດສິນໄດ້; ຕ້ອງປະກອບເອກະສານຄົບຖ້ວນ ແລ້ວລາຍງານໃຫ້ຂັ້ນເທິງຖັດຕົນເປັນຜູ້ພິຈາລະນາ;
- ຄົ້ນຄ້ວານະໂຍບາຍ ແລະ ມາດຕະການໃນການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຄວບຄຸມເປັນແຕ່ລະໄລຍະ;
- ແຈ້ງ ແລະ ເປີດໂທລະສັບໄວ້ຕະຫຼອດ 24 ຊົ່ວໂມງ ໃຫ້ສັງຄົມສາມາດເຂົ້າຫາໄດ້ ເພື່ອຮັບການຮ້ອງທຸກໂດຍສະເພາະ.

3. <u>ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງລາຄາ ຂັ້ນເມືອງ</u>:

- ນອກຈາກສິດ ແລະ ໜ້າທີ່ງໄດ້ລະບຸໄວ້ໃນມາດຕາ 16 ຂອງດໍາລັດເລກທີ 474/ນຍ ແລ້ວ, ຍັງຕ້ອງໄດ້ຕິດຕາມ, ກວດກາ ລາຄາສິນຄ້າ ແລະ ຄ່າບໍລິການ ໃນຂອບເຂດເມືອງທີ່ຕົນຮັບຜິດຊອບ, ທັງລາຍການສິນຄ້າທີ່ລະບຸໄວ້ໃນ "ບັນຊີ ກ" ແລະ "ບັນຊີ ຂ";
- ຕິດຕາມການເໜັງຕີງຂອງລາຄາສິນຄ້າ ແລະ ຄ່າບໍລິການ ຢູ່ຕາມຫ້າງຮ້ານ ແລະ ຢູ່ໃນທ້ອງຕະຫລາດ ທີ່ຢູ່ໃນຂອບເຂດເມືອງຂອງຕົນຮັບຜິດຊອບເປັນປະຈໍາແຕ່ລະວັນ, ໃຫ້ຮູ້ໄດ້ສາຍເຫດຂອງການປ່ຽນແປງລາຄາສິນຄ້າ ແລະ ຄ່າບໍລິການເຫຼົ່ານັ້ນ ແລ້ວລາຍງານໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ ຫຼື ນະຄອນຫຼວງ ທີ່ຕົນຂຶ້ນກັບເປັນປົກກະຕິ;
- ຊຸກຍູ້ບັນດາຫົວໜ່ວຍທຸລະກິດ ແລະ ຫ້າງຮ້ານຕ່າງໆ ຕິດລາຄາສິນຄ້າ ແລະ ຄ່າບໍລິການ ທຸກລາຍການ ໃນ "ບັນຊີ ກ" ແລະ "ບັນຊີ ຂ" ທີ່ວາງຈໍາໜ່າຍ ແລະ ໃຫ້ການບໍລິການ ຢູ່ໃນຂອບເຂດເມືອງຂອງຕົນ, ເພື່ອສ້າງຄວາມສະດວກໃຫ້ຜູ້ຊື້ ແລະ ຜູ້ມາໃຊ້ບໍລິການ ໄດ້ປຽບທຽບລາຄາ ແລະ ສາມາດຕັດ ສິນໃຈດ້ວຍຕົນເອງໃນການຊົມໃຊ້;
- ຈັດຕັ້ງໃຫ້ມີບ່ອນຮັບຄໍາຮ້ອງທຸກ ເປັນແຕ່ລະຈຸດຢູ່ໃນຂອບເຂດເມືອງທີ່ຕົນຮັບຜິດຊອບ, ເພື່ອເປັນບ່ອນໄກ່ເກ່ຍ ແລະ ແກ້ໄຂຄໍາຮ້ອງທຸກຂອງຜູ້ຊົມໃຊ້ ທີ່ຖືກເອົາປຽບທາງດ້ານສິນຄ້າ, ລາຄາ, ມາດຕາວັດແທກ ຊັ່ງຜ່ອງ, ການໃຫ້ບໍລິການ ແລະ ອື່ນໆ ຈາກຜູ້ຂາຍສິນຄ້າ ແລະ ຜູ້ໃຫ້ບໍລິການ ຫລື ຮັບຄໍາຮ້ອງທຸກ, ຮ້ອງຟ້ອງ ຂອງຜູ້ປະກອບການ ກ່ຽວກັບການປະຕິບັດໜ້າທີ່ຂອງພະນັກງານ ແລະເຈົ້າໜ້າທີ່ຕ່າງໆ ໃນການກວດກາສິນຄ້າ ແລະ ການບໍລິການ ທີ່ມີການປະພຶດຕົນບໍ່ສຸພາບ ຫຼື ມີການກະທໍາທີ່ບໍ່ຖືກຕ້ອງ; ໂດຍເປັນເຈົ້າການໃນການຕິດຕາມ ແລະ ປະສານສົມທົບກັບພາກສ່ວນ

ທີ່ກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂ, ໄກ່ເກ່ຍບັນຫາຕ່າງໆ ກ່ຽວກັບການລະເມີດດຳລັດ 474/ນຍ, ຂໍ້ກຳນົດ ແລະ ບັນດາລະບຽບການທີ່ກ່ຽວຂ້ອງກັບລາຄາສິນຄ້າ ແລະ ຄ່າບໍລິການ.

- ຖ້າການກະທຳຂອງບຸກຄົນດັ່ງກ່າວ ຫາກເກີນສິດອຳນາດ ທີ່ຕົນບໍ່ສາມາດຈະຕັດສິນໄດ້; ຕ້ອງປະກອບເອກະສານຄົບຖ້ວນ ແລ້ວລາຍງານໃຫ້ຂັ້ນເທິງຖັດຕົນເປັນຜູ້ພິຈາລະນາ;
- ຄົ້ນຄ້ວານະໂຍບາຍ ແລະ ມາດຕະການໃນການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຄວບຄຸມເປັນແຕ່ລະໄລຍະ;
- ແຈ້ງ ແລະ ເປີດໂທລະສັບໄວ້ຕະຫຼອດ 24 ຊົ່ວໂມງ ໃຫ້ສັງຄົມສາມາດເຂົ້າຫາໄດ້ ເພື່ອຮັບການຮ້ອງທຸກໂດຍສະເພາະ.

4. <u>ສິດ ແລະ ໜ້າທີ່ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ:</u>

1. <u>ໜ້າທີ່ຂອງສະພາກາຄ້າ ແລະອຸດສາຫະກຳແຫ່ງຊາດ, ສະມາຄົມ, ກຸ່ມທຸລະກິດ ແລະຜູ້ດຳເນີນທຸລະກິດ.</u>

1.1 <u>ໜ້າທີ່ຂອງສະພາກາຄ້າ ແລະອຸດສາຫະກຳແຫ່ງຊາດ, ສະມາຄົມ ແລະ ກຸ່ມທຸລະກິດ.</u>

- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ເປັນໃຈກາງປະສານງານ ລະຫວ່າງ ພາກລັດ ແລະ ພາກທຸລະກິດ; ໃນນີ້ ລວມທັງສະມາຄົມ ແລະ ກຸ່ມທຸລະກິດ ທີ່ຂຶ້ນກັບສະພາການຄ້າ ແລະ ອຸດສາຫະກຳຄຸ້ມຄອງ.
- ເຜີຍແຜ່ ແລະ ຊີ້ນຳ ໃນການປະຕິບັດສິດ, ພັນທະ, ຂໍ້ຫ້າມ, ນະໂຍບາຍ ແລະ ມາດຕະການຂອງຫົວໜ່ວຍທຸລະກິດຕາມທີ່ລະບຸໄວ້ໃນໝວດ 4, ໝວດ 5 ແລະໝວດ 6 ຂອງດຳລັດ ສະບັບເລກທີ 474/ນຍ ດ້ວຍຄວາມເປັນເຈົ້າການສູງ.
- ຄົ້ນຄວ້າ, ຊີ້ນຳ ບັນດາຫົວໜ່ວຍທຸລະກິດ ໃນການປະຕິບັດການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ ໃນດຳລັດເລກທີ 474/ນຍ ຢ່າງເຂັ້ມງວດ.

1.2 <u>ໜ້າທີ່ຂອງຜູ້ດຳເນີນທຸລະກິດ.</u>

ຜູ້ດຳເນີນທຸລະກິດ, ນອກຈາກປະຕິບັດສິດ ແລະ ພັນທະ ຕາມທີ່ໄດ້ລະບຸໄວ້ໃນໝວດ 4, ໝວດ 5 ແລະ ໝວດ 6 ຂອງດຳລັດ 474/ນຍ ແລ້ວ, ຍັງມີໜ້າທີ່ດັ່ງນີ້:

- ຕ້ອງສ້າງໂຄງປະກອບລາຄາ (ຕົ້ນທຶນການຜະລິດ, ຕົ້ນທຶນການນຳເຂົ້າ, ລາຄາຂາຍຍົກ ແລະ ລາຄາຂາຍຍ່ອຍ) ຕາມລາຍການສິນຄ້າທີ່ລັດຄວບຄຸມ ແລະ ສິນຄ້າທີ່ມີຢູ່ໃນລາຍການເຄື່ອນໄຫວທຸລະກິດ ຂອງຕົນ ແລ້ວສະເໜີຜ່ານສະພາການຄ້າ ແລະ ອຸດສາຫະກຳ ເພື່ອສະເໜີຕໍ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ປະຕິບັດຕາມລະບຽບການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ທີ່ວາງອອກ, ແລ້ວຈຶ່ງສາມາດປະຕິບັດລາຄາ ແລະ ນຳເອົາສິນຄ້າເຫຼົ່ານັ້ນອອກຈຳໜ່າຍໄດ້;
- ຖ້າມີຈຸດປະສົງປ່ຽນແປງລາຄາ ເຊັ່ນ: ປັບລາຄາຂຶ້ນ ຫຼື ປັບລາຄາລົງ, ບໍ່ວ່າລາຄາຂາຍຍົກ ກໍຄືລາຄາຂາຍຍ່ອຍ ຫຼື ຄ່າບໍລິການ ຄວບຄຸມ; ກໍ່ຕ້ອງໄດ້ສະເໜີໂຄງປະກອບລາຄາສິນຄ້າ ແລະ ຄ່າບໍລິການດັ່ງກ່າວ ແລະ ຕ້ອງໄດ້ອະທິບາຍເຫດຜົນຂອງການປ່ຽນແປງລາຄາ ໃຫ້ພາກລັດຂັ້ນເທິງຕົນຮັບຮູ້ທຸກຄັ້ງ, ພາຍຫຼັງມີການຮັບຮອງ ແລະອະນຸມັດແລ້ວ ຈຶ່ງສາມາດປະຕິບັດລາຄາໃໝ່ໄດ້, ບໍ່ວ່າກໍລະນີປັບລາຄາຂຶ້ນ ກໍຄືເວລາປັບລາຄາລົງ.

## V. ນຳໃຊ້ນະໂຍບາຍ ຕໍ່ ຜູ້ມີຜົນງານ ແລະ ນຳໃຊ້ມາດຕະການ ຕໍ່ຜູ້ລະເມີດ

### 1. ນະໂຍບາຍຕໍ່ຜູ້ມີຜົນງານ

ຄົ້ນຄວ້າ, ພິຈາລະນາ ແລະ ນຳສະເໜີຂັ້ນເທິງ ໃນການປະຕິບັດການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນໆ ຕາມຄວາມເໝາະສົມໃນແຕ່ລະກໍລະນີ ຕໍ່ຜູ້ດຳເນີນທຸລະກິດທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດບັນດາລະບຽບການທີ່ກ່ຽວຂ້ອງກັບລາຄາສິນຄ້າ ແລະ ຄ່າບໍລິການ ຕາມແຕ່ລະກໍລະນີໃຫ້ເໝາະສົມ ເຊັ່ນ: ເຈົ້າໜ້າທີ່ຜູ້ທີ່ຫ້າວຫັນໃນວຽກງານ, ປະຕິບັດລະບຽບການຖືກຕ້ອງ ແລະ ນັກທຸລະກິດທີ່ດຳເນີນທຸລະກິດຖືກຕ້ອງ, ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນກ່ຽວກັບລາຄາຢ່າງຖືກຕ້ອງ, ຊັດເຈນ ແລະ ທັນເວລາ.

### 2. ມາດຕະການສຶກສາອົບຮົມ

ຕັກເຕືອນ ແລະ ສຶກສາອົບຮົມ ຕໍ່ຜູ້ດຳເນີນທຸລະກິດ ທີ່ໄດ້ລະເມີດດຳລັດ474/ນຍ, ຂໍ້ກຳນົດທີ່ກ່ຽວຂ້ອງ ແລະ ບົດແນະນຳສະບັບນີ້ ທີ່ບໍ່ເປັນການກະທຳຜິດທາງອາຍາ ດ້ວຍຄວາມເປັນເຈົ້າການ; ການຕັກເຕືອນ ແລະ ສຶກສາອົບຮົມດັ່ງກ່າວຕໍ່ແຕ່ລະກໍລະນີສູງສຸດແມ່ນບໍ່ໃຫ້ເກີນສອງຄັ້ງ.

### 3. ມາດຕະການຕໍ່ຜູ້ລະເມີດ

ຄົ້ນຄວ້າ, ພິຈາລະນາ ແລະ ສະເໜີຂັ້ນເທິງ ໃນການສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ ຕໍ່ຜູ້ດຳເນີນທຸລະກິດທີ່ໄດ້ລະເມີດດຳລັດ 474/ນຍ, ຂໍ້ກຳນົດທີ່ກ່ຽວຂ້ອງ ແລະ ບົດແນະນຳສະບັບນີ້ຢ່າງເຂັ້ມງວດ.

### 4. ມາດຕະການທາງວິໄນ

ຄົ້ນຄວ້າ, ພິຈາລະນາ ແລະ ນຳສະເໜີຂັ້ນເທິງ ໃນການປະຕິບັດມາດຕະການທາງວິໄນ ຕໍ່ພະນັກງານ ຫຼືເຈົ້າໜ້າທີ່ ທີ່ໄດ້ລະເມີດດຳລັດເລກທີ 474/ນຍ, ຂໍ້ກຳນົດທີ່ກ່ຽວຂ້ອງ ແລະ ບົດແນະນຳສະບັບນີ້ ໂດຍອີງເນື້ອໃນຂອງການກະທຳຄວາມຜິດ ທີ່ໄດ້ລະບຸໄວ້ໃນລະບຽບກົດໝາຍຄຸ້ມຄອງລັດຖະກອນ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

### 5. ມາດຕະການປັບໃໝ

ໃຫ້ປະຕິບັດມາດຕະການປັບໃໝຕໍ່ຜູ້ດຳເນີນທຸລະກິດ ທີ່ໄດ້ລະເມີດ ດຳລັດ474/ນຍ, ຂໍ້ກຳນົດທີ່ກ່ຽວຂ້ອງ ແລະ ບົດແນະນຳສະບັບນີ້ ທີ່ບໍ່ເປັນການກະທຳຜິດທາງອາຍາຢ່າງເຂັ້ມງວດ, ພາຍຫຼັງທີ່ໄດ້ໃຫ້ການຕັກເຕືອນ ແລະ ສຶກສາອົບຮົມມາແລ້ວສອງຄັ້ງ. ມາດຕະການປັບໃໝແມ່ນໃຫ້ປະຕິບັດຕາມແຕ່ລະກໍລະນີຂອງການກະທຳຜິດ ດັ່ງນີ້:

- ບໍ່ຕິດປ້າຍລາຄາ ມີໂທດປັບໃໝແຕ່ 500.000 ກີບ - 1.000.000 ກີບ/ຄັ້ງ/ລາຍການ;
- ແຈ້ງຂໍ້ມູນເທັດ ກ່ຽວກັບໂຄງປະກອບລາຄາ ຫຼືຄັງແຮສຳຮອງມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;
- ບໍ່ແຈ້ງໂຄງປະກອບລາຄາມີໂທດປັບໃໝແຕ່ 1.000.000 ກີບ - 3.000.000 ກີບ/ຄັ້ງ/ລາຍການ;
- ນຳເອົາສິນຄ້າທີ່ມີໄວ້ໃນຄັງແຮສຳຮອງອອກຈຳໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລາຄາ ມີໂທດປັບໃໝແຕ່ 1.000.000 ກີບ - 3.000.000 ກີບ/ຄັ້ງ/ລາຍການ;
- ຢຸດ, ປະຕິເສດ ຫຼືແກ່ຍາວເວລາການຈຳໜ່າຍ ຫຼື ການບໍລິການ ໂດຍບໍ່ມີເຫດຜົນ ໃນເມື່ອມີຄຳສັ່ງຈາກອົງການຄຸ້ມຄອງລາຄາ ມີໂທດປັບໃໝແຕ່ 1.000.000 ກີບ - 3.000.000 ກີບ/ຄັ້ງ/ລາຍການ;

- ນຳໃຊ້ໂຄງປະກອບລາຄາ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລາຄາ ມີໂທດປັບໃໝແຕ່ 1.000.000 ກີບຫາ 5.000.000 ກີບ/ຄັ້ງ/ລາຍການ.

6. <u>ມາດຕະການທາງແພ່ງ ແລະທາງອາຍາ</u>

ຄົ້ນຄວ້າ ແລະ ນຳສະເໜີຂັ້ນເທິງ ໃນການປະຕິບັດມາດຕະການທາງແພ່ງ ແລະທາງອາຍາຕາມຂະບວນການຍຸຕິທຳ ຕໍ່ຜູ້ກະທຳຜິດ ໂດຍໃຫ້ອີງໃສ່ລະບຽບກົດໝາຍທີ່ກ່ຽວຂ້ອງ.

7. <u>ມາດຕະການໂທດເພີ່ມ</u>

ໃຫ້ພິຈາລະນາໃນການປະຕິບັດມາດຕະການໂທດເພີ່ມ ຕໍ່ຜູ້ດຳເນີນທຸລະກິດທີ່ໄດ້ລະເມີດດຳລັດເລກທີ 474/ນຍ, ຂໍ້ກຳນົດທີ່ກ່ຽວຂ້ອງ ແລະ ບົດແນະນຳສະບັບນີ້ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງຢ່າງເຂັ້ມງວດ ເຊັ່ນ: ໂຈະ ຫຼື ຖອນໃບທະບຽນວິສາຫະກິດ, ໃບອະນຸຍາດຕ່າງໆ ແລະ/ຫຼື ຮິບວັດຖຸສິ່ງຂອງຕ່າງໆຖ້າເຫັນວ່າມີຄວາມຈຳເປັນ.

ບົດແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຄຳສັ່ງແນະນຳສະບັບເລກທີ 0334/ກຄ.ພນ, ລົງວັນທີ 22/03/2002 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາ; ທຸກໆຄຳສັ່ງ ແລະ ລະບຽບການ ທີ່ຂັດກັບບົດແນະນຳສະບັບນີ້ ແມ່ນໃຫ້ຍົກເລີກ.

ດັ່ງນັ້ນ, ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນຈັດຕັ້ງປະຕິບັດບົດແນະນຳສະບັບນີ້ຢ່າງເຂັ້ມງວດ.

ຮມ. ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະການຄ້າ

ສຽວສະຫວາດ ສະແຫວງສຶກສາ

<u>ບ່ອນສົ່ງ</u>:

- ຫ້ອງວ່າການສູນກາງພັກ (ເພື່ອລາຍງານ).
- ຫ້ອງວ່າການສຳນັກງານນາຍົກ (ເພື່ອລາຍງານ).
- ເຈົ້າແຂວງ ແຕ່ລະແຂວງ (ເພື່ອຊາບ ແລະ ຊີ້ນຳ).
- ສຳເນົາ.